# Community Profile

ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ LIWG | Brot für die Welt | HELVETAS LAOS | ອົງການ ມິດຕະພາບ ເມັນໂນນາຍ

## ໂຄງການສົ່ງເສີມການຜະລິດກະສິກຳແບບຍືນຍົງຜ່ານໂຄງການຄວາມສະເໝີພາບຍິງ-ຊາຍ ແລະ ການມີສ່ວນຮ່ວມຂອງຄົນພິການ (PSAPGI) ທີ່ບ້ານສອງ, ເມືອງຄຳ, ແຂວງ ບໍລິຄຳໄຊ

### ຈຳນວນສະຖິຕິຂອງບ້ານ




### ຂໍ້ມູນໂດຍລວມຂອງບ້ານ



ບ້ານສອງເປັນບ້ານຂະໜາດນ້ອຍທີ່ຍ້າຍອອກຈາກຄຸ້ມໃຕ້ມາຢູ່ບ້ານໃໝ່ເປັນເວລາ 22 ປີແລ້ວ, ມີເນື້ອທີ່ທັງໝົດ 3,500 ຮຕ. ໂດຍພື້ນທີ່ສ່ວນໃຫຍ່ແມ່ນເໝາະແກ່ການປູກຝັງເປັນຕົ້ນແມ່ນຊາ ແລະ ກາເຟ ຊຶ່ງຊາວບ້ານເອງກໍພະຍາຍາມເລັ່ງໃສ່ຄຸນນະພາບຂອງການຜະລິດເພື່ອມຸ່ງໃສ່ການສົ່ງອອກ ແລະ ຂະຫຍາຍການຕະຫຼາດ. ອາຊີບປະຊາຊົນສ່ວນໃຫຍ່ແມ່ນເຮັດໄຮ່ເຂົ້າ, ລ້ຽງງົວ ແລະ ປູກຊາເປັນອາຊີບຫຼັກ ແລະ ກຳລັງຫັນເຂົ້າສູ່ການເຮັດກະສິກຳເປັນສິນຄ້າຫຼັກເຊັ່ນ: ການປູກຊາ, ກາເຟ ແລະ ການລ້ຽງງົວ.

### ຊະນິດຂອງດິນ

- ດິນສວນຊາ
- ດິນຂັ້ນງົວ
- ດິນໝູນວຽນກະສິກຳ

ໃນບ້ານສອງນີ້ ແມ່ນໄດ້ຈັດສັນທີ່ດິນໃຫ້ແຕ່ລະຄອບຄົວພາຍໃນບ້ານ ໄດ້ຖືກຕ້ອງໂດຍປາສະຈາກຂໍ້ຂັດແຍ່ງພາຍໃນ. ນອກນັ້ນ ຫຼັງຈາກທີ່ປະຊາຊົນໄດ້ເຂົ້າເຖິງ, ການຝຶກອົບຮົມວຽກບົດບາດຍິງຊາຍ, ປະຕິທິນກົດໝາຍ ພວກເຂົາໄດ້ຮັບຮູ້ ແລະ ເຂົ້າໃຈເຖິງສິດ ແລະ ພາລະບົດບາດຕໍ່ກັບການນຳໃຊ້ທີ່ດິນຂອງພວກເຂົາເຊັ່ນ ມີການບັນທຶກທັງຊື່ຜົວ ແລະ ເມຍໃນໃບຕາດິນ, ການແບ່ງປັນມູນມໍລະດົກຂອງຊັບສິນທີ່ດິນໃຫ້ເທົ່າທຽມແກ່ລູກຊາຍ ແລະ ລູກສາວ, ໄດ້ສະແດງຄວາມກ້າຫານ, ໂດຍການອ້າງສິດຂອງພວກເຂົາຕໍ່ກັບພາລະບົດບາດໃນການເປັນເຈົ້າຂອງທີ່ດິນ ໃນເວລາມີບໍລິສັດເຂົ້າມາສຳປະທານໃນພື້ນທີ່ຂອງພວກເຂົາ. ກ່ອນໜ້ານີ້ ການປູກຊາ, ກາເຟ ຂອງຊາວບ້ານຍັງເປັນລັກສະນະການປູກແບບອາໄສທຳມະຊາດ ຊຶ່ງເຮັດໃຫ້ຜົນຜະລິດຍັງບໍ່ມີຄຸນນະພາບພຽງພໍ ແລະ ມີຜົນກະທົບຕໍ່ກັບປະລິມານການສົ່ງອອກ. ຫຼັງຈາກໂຄງການ PSAPGI ໄດ້ເຂົ້າມາຝຶກອົບຮົມໃຫ້ແກ່ ຊາວບ້ານ ເປັນຕົ້ນແມ່ນການກ້າເບ້ຍ, ວິທີໃນການປູກຕ່າງໆ, ການບົວລະບັດຮັກສາ. ນອກນັ້ນ ທາງໂຄງການຍັງໄດ້ສາທິດການຂົ້ວກາເຟທີ່ເໝາະສົມ ເພື່ອແທດເໝາະກັບຄວາມຕ້ອງການກັບກຸ່ມຜູ້ບໍລິໂພກ ແລະ ໂຄງການຍັງໄດ້ສະໜອງອຸປະກອນ ເພື່ອຄວາມສະດວກໃນການຜະລິດ, ຖ້າປະຊາຊົນສາມາດຈັດຕັ້ງປະຕິບັດໄດ້ຕາມໂຄງການແນະນຳ ບ້ານສອງກໍຈະເປັນບ້ານໜຶ່ງທີ່ສາມາດຜະລິດຊາກາເຟໄດ້ແບບຕ່ອງໂສ້





# ພາບໂດຍລວມຂອງໂຄງການ

ຫຼັງຈາກໂຄງການຕ່າງໆ ໄດ້ລົງຈັດຕັ້ງປະຕິບັດແລ້ວ ເຫັນໄດ້ວ່າ ຊາວບ້ານໄດ້ມີຄວາມອາດສາມາດ ແລະ ເຂົ້າໃຈເຖິງ ວິທີການເຮັດການກະສິກຳແບບມີຄຸນນະພາບ ແລະ ການສົ່ງເສີມບົດບາດຍິງ-ຊາຍຕໍ່ກັບວຽກງານທີ່ດິນ ເຮັດໃຫ້ປະຊາຊົນມີເປົ້າໝາຍໃນການເຮັດການຕະຫຼາດສູ່ພາຍນອກ ແລະ ສິດສະເໝີພາບໃນການເປັນເຈົ້າຂອງທີ່ດິນຮ່ວມກັນ ເພື່ອສ້າງຄວາມໝັ້ນຄົງໃນການໄລຍະຍາວແກ່ການນຳໃຊ້ທີ່ດິນຂອງຕົນໃຫ້ເກີດຜົນ ແລະ ນີ້ກໍແມ່ນຄຳຄິດເຫັນຂອງຜູ້ທີ່ຮັບຜົນປະໂຫຍດຈາກໂຄງການ:




**ປານີ**

ຊາວບ້ານ ບ້ານສອງ

"ເຫດຜົນທີ່ຂ້າພະເຈົ້າ ເລືອກເຂົ້າມາຮ່ວມກິດຈະກຳຂອງໂຄງການຍ້ອນວ່າ ການທີ່ຄົນເຮົາຈະເຮັດສິ່ງໃດໜຶ່ງ ແມ່ນລ້ວນແຕ່ຕ້ອງມີຄວາມຮູ້ ຕ້ອງມີວິທີແນວທາງທີ່ຖືກຕ້ອງ ນອກນັ້ນ ພວກເຮົາຍັງໄດ້ຮຽນຮູ້ເລື່ອງບົດບາດ, ຄວາມສະເໝີພາບຍິງ-ຊາຍ, ກົດໝາຍທີ່ດິນ ແລະ ວິທີການເຮັດກະສິກຳແບບຍືນຍົງທີ່ຈະເປັນແນວທາງປະຕິບັດທີ່ດີໃຫ້ຊາວບ້ານເຮົາ. ໃນອະນາຄົດ ຖ້າເປັນໄປໄດ້ພວກເຮົາຢາກເຫັນປະຊາຊົນພາຍໃນບ້ານເຮົາສາມາດເຕີບໃຫຍ່ຈາກການປະກອບກິດຈະການຂອງຕົນເອງບໍ່ວ່າຈະເປັນການຜະລິດຊາ ຫຼື ກາເຟ ເພື່ອສົ່ງອອກ ແລະ ມີລາຍໄດ້ຈົນສາມາດສ້າງຊີວິດໃໝ່ໃຫ້ພວກເຂົາ".

"ຕາມການສັງເກດເຫັນໄດ້ວ່າ ບ້ານສອງແຫ່ງນີ້ເປັນໝູ່ບ້ານທີ່ມີການປູກຊາ ແລະ ກາເຟໃນຫຼາຍພື້ນທີ່ ທາງໂຄງການ PSAPGI ຈຶ່ງໄດ້ເຂົ້າມາຊ່ວຍເຫຼືອດ້ານການຜະລິດຜົນລະປູກດັ່ງກ່າວເພື່ອຍົກສູງຄຸນນະພາບ ແລະ ຂະຫຍາຍສູ່ຕະຫຼາດພາຍນອກ, ການນຳເອົາວຽກບົດບາດຄວາມສະເໝີພາບຍິງ-ຊາຍ ແລະ ຄົນພິການມາມີສ່ວນຮ່ວມໃນການເຮັດກະສິກຳແບບຍືນຍົງ ກໍຖືເປັນບຸລິມາສິດອັນໜຶ່ງຂອງວຽກໂຄງການເຊັ່ນກັນ.
ຂ້າພະເຈົ້າຄິດວ່າການທີ່ເຮົາຝຶກອົບຮົມໃຫ້ ຊາວບ້ານຜະລິດກະເຟໃນຄັ້ງດຽວ ແລ້ວສາມາດກຸ້ມໄດ້ໃນໄລຍະຍາວຈະເປັນສິ່ງທີ່ດີຫຼາຍ. ຖ້າວ່າໂຄງການຊ່ວຍປັບປຸງຄຸນະພາບຂອງຊາ ແລະ ກາເຟ ແລ້ວສາມາດສົ່ງອອກຕະຫຼາດໃນລາຄາສູງໄດ້ກໍຈະເປັນໝູ່ບ້ານຕົວແບບໃນເຂດນັ້ນ, ນອກນັ້ນ ຂ້າພະເຈົ້າຍັງຢາກເຫັນການມີສ່ວນຮ່ວມຂອງແມ່ຍິງ ໃນການຕັດສິນໃຈພາຍໃນຄອບຄົວ ເພື່ອເປັນຄອບຄົວທີ່ເຂັ້ມແຂງໃນແຕ່ລະຄົວເຮືອນ"



**ຊໍ່ທໍ່ ເຊົາຈ້າ**

ພະນັກງານ ສະມາຄົມ



**ທ່ານ ນາງ ບຸນເຫຼືອ**

ພະນັກງານພະແນກກະສິກຳ
ແລະ ປ່າໄມ້ ແຂວງຊຽງຂວາງ

"ຂ້າພະເຈົ້າໃນນາມພະນັກງານລັດຂັ້ນແຂວງຮູ້ສຶກດີໃຈຫຼາຍທີ່ໄດ້ມາຢ້ຽມຢາມບ້ານສອງແຫ່ງນີ້ ແລະ ໄດ້ເຫັນໝາກຜົນຂອງການຈັດຕັ້ງປະຕິບັດໂຄງການ. ຫຼັງຈາກໂຄງການໄດ້ເຂົ້າມາຊ່ວຍເຫຼືອໃນບ້ານແຫ່ງນີ້ ຂ້າພະເຈົ້າ ເຫັນໄດ້ວ່າໂຄງການໄດ້ປູກຈິດສຳນຶກໃຫ້ກັບ ຊາວບ້ານເພື່ອສົ່ງເສີມການຜະລິດກະສິກຳ ໃຫ້ສາມາດສ້າງລາຍໄດ້ຫາລ້ຽງຊີບຄອບຄົວໄດ້ພຽງພໍ ແລະ ຂ້າພະເຈົ້າເອງໃນນາມພະແນກ ກະສິກຳ ແລະ ປ່າໄມ້ແຂວງ ກໍພ້ອມທີ່ຈະໃຫ້ການສະໜັບສະໜູນໃນດ້ານເຕັກນິກ ແລະ ວິຊາການຕ່າງໆ. ໃນອະນາຄົດຂ້າງໜ້າຂ້າພະເຈົ້າຢາກເຫັນການຊ່ວຍເຫຼືອທາງດ້ານງົບປະມານ, ເຕັກນິກ ແລະ ອຸປະກອນຕ່າງໆ ເພື່ອຊຸກຍູ້ ຄວາມອາດສາມາດຂອງປະຊາຊົນໃຫ້ມີຄວາມຍືນຍົງ ແລະ ທຸກກິດຈະກຳທີ່ໂຄງການໄດ້ໃຫ້ການຊ່ວຍເຫຼືອໃຫ້ໄດ້ບັນລຸຕາມເປົ້າໝາຍ"